# ທະນາຄານພົງສະຫວັນ ຈຳກັດ

ບົດລາຍງານຖານະການເງິນ ປະຈຳປີ 2015

ໂດຍອີງໃສ່ແບບລາຍງານການເງິນຂອງກົມບັນຊີ-ການເງິນ ຂອງ ທະນາຄານແຫ່ງ ສ ປປ ລາວ

# ທະນາຄານ ພົງສະຫວັນ ຈຳກັດ

ເອກະສານລາຍງານການເງິນ

ວັນທີ 31 ທັນວາ 2015

# ທະນາຄານ ພົງສະຫວັນ ຈຳກັດ

## ສາລະບານ


| | ໜ້າ |
|---|---|
| ຂໍ້ມູນທົ່ວໄປຂອງທະນາຄານ | 1 - 2 |
| ບົດລາຍງານຂອງຄະນະອຳນວຍການ | 3 |
| ບົດລາຍງານຂອງນັກກວດສອບອິດສະຫຼະ | 4 - 5 |
| ໃບລາຍງານຜົນໄດ້ຮັບ | 6 |
| ໃບສະຫຼຸບຊັບສິນບັດ | 7 - 9 |
| ໃບລາຍງານສ່ວນປ່ຽນແປງທຶນຕົນເອງ | 10 |
| ໃບລາຍງານກະແສເງິນສົດ | 11 - 12 |
| ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນ | 13 - 34 |

# ທະນາຄານ ພົງສະຫວັນ ຈຳກັດ

ຂໍ້ມູນທົ່ວໄປຂອງທະນາຄານ

**ທະນາຄານ**

ທະນາຄານພົງສະຫວັນ ຈຳກັດ (ຕໍ່ໄປນີ້ເອີ້ນວ່າ "ທະນາຄານ") ເປັນທະນາຄານເອກະຊົນ 100% ເຊິ່ງດຳເນີນທຸລະກິດ ແລະ ຈົດທະບຽນຢູ່ໃນ ສປປ ລາວ.

ທະນາຄານໄດ້ດຳເນີນທຸລະກິດພາຍໃຕ້ໃບອະນຸຍາດດຳເນີນທຸລະກິດເລກທີ 04/ທຫລ ອອກໂດຍທະນາຄານແຫ່ງ ສປປ ລາວ ເຊິ່ງມີຜົນບັງຄັບໃຊ້ນັບແຕ່ວັນທີ 2 ກຸມພາ 2007. ໃບອະນຸຍາດແມ່ນມີໄລຍະເວລາໃນການດຳເນີນທຸລະກິດ 1 ປີ ແລະ ຕໍ່ໃໝ່ທຸກໆປີ.

ທຸລະກຳຕົ້ນຕໍຂອງທະນາຄານ ແມ່ນເພື່ອສະໜອງການບໍລິການລວມທັງການລະດົມທຶນໂດຍການຮັບຝາກເງິນໄລຍະສັ້ນ, ກາງ ແລະ ຍາວຈາກອົງການຈັດຕັ້ງ ແລະ ບຸກຄົນ, ປ່ອຍເງິນກູ້ໄລຍະສັ້ນ, ກາງ, ຍາວ ແລະ ເງິນລ່ວງໜ້າໃຫ້ແກ່ອົງການຈັດຕັ້ງ ແລະ ບຸກຄົນ ອີງຕາມຈຸດປະສົງ ແລະ ຄວາມສາມາດໃນການສະໜອງທຶນຂອງທະນາຄານ; ການແລກປ່ຽນເງິນຕາຕ່າງປະເທດ, ການບໍລິການ ການຄ້າລະຫວ່າງປະເທດ, ສ່ວນຫລຸດຂອງເອກະສານທາງການຄ້າ, ພັນທະບັດ ແລະ ເອກະສານທີ່ມີຄ່າອື່ນໆ, ແລະ ໃຫ້ບໍລິການດ້ານທະນາຄານອື່ນໆ ທີ່ໄດ້ຮັບອະນຸຍາດຈາກທະນາຄານແຫ່ງ ສປປ ລາວ.

ທຶນຈົດທະບຽນໃນເບື້ອງຕົ້ນແມ່ນ 97,100,000,000 ກີບ. ທຶນຈົດທະບຽນຕົວຈິງນະວັນທີ 31 ທັນວາ 2015 ແມ່ນ 122,786,387,963 ກີບ ( 31 ທັນວາ 2014 : 122,786,387,963 ກີບ).

ສຳນັກງານໃຫຍ່ຂອງທະນາຄານຕັ້ງຢູ່ຖະໜົນ ໄກສອນພົມວິຫານ, ບ້ານ ພະຂາວ, ເມືອງ ໄຊທານີ, ນະຄອນຫລວງວຽງຈັນ. ນະວັນທີ 31 ທັນວາ 2015 ທະນາຄານມີ ໜຶ່ງ (1) ສຳນັກງານໃຫຍ່, ສີ່ (4) ສາຂາຫຼັກ, ໜຶ່ງ (1) ສູນບໍລິການ, ສິບສອງ (12) ໜ່ວຍບໍລິການ ແລະ ສິບຫົກ (16) ໜ່ວຍບໍລິການນ້ອຍໃນທົ່ວ ສປປ ລາວ.

**ສະພາບໍລິຫານ**

ສະມາຊິກສະພາບໍລິຫານຂອງທະນາຄານພາຍໃນປີ ແລະ ນະວັນທີທີ່ອອກບົດລາຍງານສະບັບນີ້ ປະກອບມີດັ່ງລຸ່ມນີ້:

| *ຊື່* | *ຕຳແໜ່ງ* | *ວັນທີແຕ່ງຕັ້ງ* |
|---|---|---|
| ທ່ານ ນາງ ດາລີ ພົນເສນາ | ປະທານ | ແຕ່ງຕັ້ງວັນທີ 10 ມີນາ 2014 |
| ທ່ານ ທອງສາຍ ອິນທິສານ | ຮອງປະທານ | ແຕ່ງຕັ້ງວັນທີ 07 ມັງກອນ 2012 |
| | | ແຕ່ງຕັ້ງຄືນໃໝ່ວັນທີ 10 ມີນາ 2014 |
| ທ່ານ ນາງ ແສງດາວ ບຸພະກອນຄຳ | ຄະນະ | ແຕ່ງຕັ້ງວັນທີ 07 ມັງກອນ 2012 |
| | | ລາອອກວັນທີ 29 ພຶດສະພາ 2015 |
| ທ່ານ ບຸນຖົນ ວົງສຸລີ | ຄະນະ | ແຕ່ງຕັ້ງວັນທີ 29 ພຶດສະພາ 2015 |
| ທ່ານ ໄຊນາລົງ ວົງໄພບູນ | ຄະນະ | ແຕ່ງຕັ້ງວັນທີ 07 ມັງກອນ 2012 |
| ທ່ານ ຈັນເພັງ ຫຼວງສຸວັນນາວົງ | ຄະນະ | ແຕ່ງຕັ້ງວັນທີ 29 ພຶດສະພາ 2015 |

# ທະນາຄານ ພົງສະຫວັນ ຈຳກັດ

ຂໍ້ມູນທົ່ວໄປຂອງທະນາຄານ (ຕໍ່)

**ຄະນະອຳນວຍການ**

ຄະນະອຳນວຍການຂອງທະນາຄານ ພາຍໃນປີ ແລະ ນະວັນທີທີ່ອອກບົດລາຍງານສະບັບນີ້ ປະກອບມີ:

| *ຊື່* | *ຕຳແໜ່ງ* | *ວັນທີແຕ່ງຕັ້ງ* |
|---|---|---|
| ທ່ານ ບຸນຖຸ້ນ ວົງສຸລີ | ອຳນວຍການໃຫຍ່ | ແຕ່ງຕັ້ງວັນທີ 29 ພຶດສະພາ 2015 |
| | ຮອງຜູ້ອຳນວຍການໃຫຍ່ | ລາອອກວັນທີ 29 ພຶດສະພາ 2015 |
| ທ່ານ ນາງ. ແສງດາວ ບຸພະກອນຄຳ | ອຳນວຍການໃຫຍ່ | ແຕ່ງຕັ້ງວັນທີ 09 ກັນຍາ 2010 |
| | | ລາອອກວັນທີ 29 ພຶດສະພາ 2015 |
| ທ່ານ ໄພບູນ ພົງສະຫວັນ | ຮອງຜູ້ອຳນວຍການໃຫຍ່ | ແຕ່ງຕັ້ງວັນທີ 04 ກັນຍາ 2012 |
| ທ່ານ ບຸນປັນ ເນົາວະລາດ | ຮອງຜູ້ອຳນວຍການໃຫຍ່ | ແຕ່ງຕັ້ງວັນທີ 04 ກັນຍາ 2012 |
| ທ່ານ ສຸດທິເດດ ນາລີວັນ | ຮອງຜູ້ອຳນວຍການໃຫຍ່ | ແຕ່ງຕັ້ງວັນທີ 04 ກັນຍາ 2012 |
| ທ່ານ ນາງ ຈຸລາລັກ ຄຳພິມ | ຮັກສາການຮອງຜູ້ອຳນວຍການໃຫຍ່ | ແຕ່ງຕັ້ງວັນທີ 20 ມັງກອນ 2015 |
| ທ່ານ ໄຊນາວິນ ເດສາຄຳພູ | ຮັກສາການຮອງຜູ້ອຳນວຍການໃຫຍ່ | ແຕ່ງຕັ້ງວັນທີ 29 ພຶດສະພາ 2015 |
| ທ່ານ ແສງຄຳ ພັນທະວົງ | ຮັກສາການຮອງຜູ້ອຳນວຍການໃຫຍ່ | ແຕ່ງຕັ້ງວັນທີ 29 ພຶດສະພາ 2015 |

**ຕົວແທນທາງດ້ານກົດໝາຍ**

ຕົວແທນທາງດ້ານກົດໝາຍຂອງທະນາຄານພາຍໃນປີ ແລະ ຮອດມື້ເຮັດບົດລາຍງານສະບັບນີ້ແມ່ນ ທ່ານ ນາງ ດາລີ ພົນເສນາ - ປະທານ.

ທ່ານ ບຸນຖຸ້ນ ວົງສຸລີ - ອຳນວຍການໃຫຍ່ ແມ່ນໄດ້ຮັບອະນຸຍາດຈາກທ່ານ ນາງ ດາລີ ພົນເສນາ ໃນການເຊັນເອກະສານລາຍງານການເງິນ ສຳລັບທ້າຍປີ 31 ທັນວາ 2015.

**ນັກກວດສອບບັນຊີ**

ນັກກວດສອບບັນຊີຂອງທະນາຄານແມ່ນບໍລິສັດ ເອີນ ແອນ ຢັງລາວ ຈຳກັດ.

# ທະນາຄານ ພົງສະຫວັນ ຈຳກັດ

ບົດລາຍງານຂອງຄະນະອຳນວຍການ

ຄະນະອຳນວຍການຂອງທະນາຄານ ພົງສະຫວັນ ຈຳກັດ (ຕໍ່ໄປນີ້ເອີ້ນວ່າ "ທະນາຄານ") ມີຄວາມຍິນດີນຳສະເໜີເອກະສານລາຍງານການເງິນຂອງທະນາຄານປະ ຈຳປີ ວັນທີ 31 ທັນວາ 2015.

**ຄວາມຮັບຜິດຊອບຂອງຜູ້ບໍລິຫານການຕໍ່ເອກະສານລາຍງານການເງິນ**

ຄະນະອຳນວຍການຂອງທະນາຄານມີໜ້າທີ່ຮັບຜິດຊອບຕໍ່ເອກະສານລາຍງານການເງິນທີ່ສະແດງໃຫ້ເຫັນຄວາມຖືກຕ້ອງ ຕາມຄວາມເປັນຈິງຂອງຖານະການເງິນ ແລະ ຜົນຂອງສະຖານະທາງການເງິນ ແລະ ຜົນການດຳເນີນງານ ແລະ ກະແສເງິນສົດຂອງທະນາຄານປະຈຳປີ. ໃນການສ້າງເອກະສານລາຍງານການເງິນດັ່ງກ່າວ ຜູ້ບໍລິຫານຂອງທະນາຄານຈະຕ້ອງປະຕິບັດດັ່ງນີ້:

- ເລືອກເຟັ້ນເອົານະໂຍບາຍການບັນຊີທີ່ເໝາະສົມ ແລະ ນຳໃຊ້ຢ່າງສະໝ່ຳສະເໝີ;
- ພິຈາລະນາ ແລະ ຄາດຄະເນຢ່າງສົມເຫດສົມຜົນ ແລະ ຮອບຄອບ;
- ຖະແຫລງການວ່າ ບັນດາມາດຕະຖານການບັນຊີທີ່ກ່ຽວຂ້ອງໄດ້ຖືກປະຕິບັດຕາມມາດຕະຖານ, ສິ່ງທີ່ໄດ້ປະຕິບັດແຕກຕ່າງຈາກມາດຕະຖານໄດ້ເປີດເຜີຍ ແລະ ອະທິບາຍຢູ່ໃນເອກະສານລາຍງານການເງິນ; ແລະ
- ກະກຽມເອກະສານລາຍງານການເງິນບົນພື້ນຖານຄວາມສືບເນື່ອງໃນການດຳເນີນທຸລະກິດ, ຍົກເວັ້ນໃນກໍລະນີທີ່ທະນາຄານຫາກຕັ້ງຂໍ້ສົມມຸດຖານ ຫລື ຄາດຄະເນວ່າທະນາຄານຈະບໍ່ສາມາດດຳເນີນທຸລະກິດຕໍ່ໄປໄດ້.

ຄະນະອຳນວຍການຂອງທະນາຄານຕ້ອງຮັບປະກັນວ່າ ບັນດາຂໍ້ມູນທາງການບັນຊີທີ່ຖືກບັນທຶກໄວ້ນັ້ນ ໄດ້ສະແດງເຖິງຄວາມຖືກຕ້ອງຢູ່ຕະ ຫລອດມາ, ເພື່ອຮັບປະກັນວ່າທຸກໆການເຄື່ອນໄຫວ ແລະ ການບັນທຶກບັນຊີນັ້ນແມ່ນສອດຄ່ອງກັບລະບົບການບັນຊີທີ່ໄດ້ນຳໃຊ້. ທະນາຄານຍັງໄດ້ຮັບຜິດຊອບຕໍ່ການຮັກສາຊັບສິນຂອງທະນາຄານ ແລະ ຮັບປະກັນວ່າທະນາຄານມີຂັ້ນຕອນຄົ້ນຫາ ແລະ ປ້ອງກັນການສໍ້ໂກງ ແລະ ສິ່ງທີ່ຜິດປົກກະຕິອື່ນໆ.

ຄະນະອຳນວຍການທະນາຄານ ຢັ້ງຢືນວ່າ ໄດ້ປະຕິບັດຕາມເງື່ອນໄຂຂ້າງເທິງ ໃນການກະກຽມເອກະສານລາຍງານການເງິນປະຈຳປີ ວັນທີ 31 ທັນ ວາ 2015.

**ຖະແຫຼງການຂອງຄະນະອຳນວຍການ**

ຄະນະອຳນວຍການຂໍຮັບຮອງວ່າ ໃນຄຳເຫັນຂອງຄະນະອຳນວຍການ ເອກະສານລາຍງານການເງິນທີ່ໄດ້ຄັດຕິດມາກັບບົດລາຍງານຂອງຄະນະອຳນວຍການສະບັບນີ້ ແມ່ນໄດ້ຖືກນຳສະເໜີຢ່າງເໝາະສົມ ແລະ ຖືກຕ້ອງ, ຕາມຖານະທາງການເງິນຂອງທະນາຄານ ສຳລັບທ້າຍປີ ນະວັນທີ 31 ທັນວາ 2015 ລວມທັງ ຜົນປະກອບການ ແລະ ກະແສເງິນສົດຂອງທະນາຄານ ພາຍໃນປີ ໂດຍສອດຄ່ອງກັບກົດໝາຍການບັນຊີ ແລະ ກົດລະບຽບການບັນຊີອື່ນໆ ທີ່ວາງອອກໂດຍທະນາຄານແຫ່ງ ສປປລາວ ທີ່ກ່ຽວຂ້ອງກັບການກະກຽມ ແລະ ການນຳສະເໜີເອກະສານລາຍງານການເງິນ.

ຕາງໜ້າຄະນະອຳນວຍການ

ທ່ານ ບຸນຖັນ ວົງສຸລີ
ອຳນວຍການໃຫຍ່

ນະຄອນຫຼວງວຽງຈັນ, ສປປ ລາວ
6 ພຶດສະພາ 2016

EY
Building a better working world

Ernst & Young Lao Limited.
6th Floor, Capital Tower
23 Singha Road, Nongbone Village
Saysettha District, Vientiane Capital, Lao PDR

Tel : +856 21 455 077
Fax: +856 21 455 078
ey.com

ເລກອ້າງອີງ: 60753097/18187268

# ບົດລາຍງານຂອງຜູ້ກວດສອບເອກະລາດ

**ຮຽນ: ຜູ້ຖືຮຸ້ນ ຂອງທະນາຄານພົງສະຫວັນ ຈຳກັດ,**

ພວກຂ້າພະເຈົ້າໄດ້ດຳເນີນການກວດສອບເອກະສານລາຍງານການເງິນຂອງທະນາຄານພົງສະຫວັນ (ຕໍ່ໄປນີ້ເອີ້ນວ່າ "ທະນາຄານ"), ເຊິ່ງປະກອບດ້ວຍ ໃບສະຫຼຸບຊັບສິນບັດ ນະວັນທີ 31 ທັນວາ 2015, ໃບລາຍງານຜົນໄດ້ຮັບ, ໃບລາຍງານສ່ວນປ່ຽນແປງທຶນຕົນເອງ ແລະ ໃບລາຍງານກະແສເງິນສົດທ້າຍປີ ແລະ ບົດສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ ແລະ ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນອື່ນໆ. ຂໍ້ມູນຕາມທີ່ໄດ້ລະບຸໃນໜ້າທີ 5 ເຖິງ 34.

***ຄວາມຮັບຜິດຊອບຂອງຜູ້ບໍລິຫານຕໍ່ເອກະສານລາຍງານການເງິນ***

ຄະນະອຳນວຍການຂອງທະນາຄານ ແມ່ນມີໜ້າທີ່ຮັບຜິດຊອບໃນການກະກຽມ ແລະ ນຳສະເໜີເອກະສານລາຍງານການເງິນໃຫ້ຖືກຕ້ອງຕາມຄວາມເປັນຈິງ ໂດຍອີງຕາມກົດໝາຍການບັນຊີວິສາຫະກິດແຫ່ງ ສປປ ລາວ ແລະ ລະບຽບການບັນຊີອື່ນໆຂອງ ທະນາຄານແຫ່ງ ສປປ ລາວ ໂດຍກ່ຽວຂ້ອງກັບການກະກຽມ ແລະ ການນຳສະເໜີຕໍ່ເອກະສານລາຍງານການເງິນ, ແລະ ການຄວບຄຸມພາຍໃນທີ່ຄະນະອຳນວຍການຕ້ອງໄດ້ກຳນົດໄວ້ ເພື່ອເຮັດໃຫ້ການສ້າງເອກະສານລາຍງານການເງິນມີຄວາມຖືກຕ້ອງຕາມຄວາມເປັນຈິງໂດຍປາສະຈາກຂໍ້ຜິດພາດອັນໃຫຍ່ຫຼວງບໍ່ວ່າຈະເປັນຍ້ອນການສໍ້ໂກງ ຫຼື ຄວາມຜິດພາດ.

***ຄວາມຮັບຜິດຊອບຂອງຜູ້ກວດສອບ***

ຄວາມຮັບຜິດຊອບຂອງພວກຂ້າພະເຈົ້າແມ່ນອອກຄຳເຫັນຕໍ່ເອກະສານລາຍງານການເງິນ ໂດຍອີງຕາມຜົນການກວດສອບຂອງພວກຂ້າພະເຈົ້າ. ພວກຂ້າພະເຈົ້າໄດ້ດຳເນີນການກວດສອບໂດຍອີງຕາມມາດຕະຖານການກວດສອບສາກົນ. ມາດຕະຖານດັ່ງກ່າວໄດ້ກຳນົດໃຫ້ພວກຂ້າພະເຈົ້າຕ້ອງໄດ້ປະຕິບັດຕາມຂໍ້ບັນຍັດດ້ານຈັນຍາບັນ. ພວກຂ້າພະເຈົ້າໄດ້ວາງແຜນ ແລະ ດຳເນີນການກວດສອບເພື່ອໃຫ້ໄດ້ຮັບຄວາມເຊື່ອໝັ້ນຢ່າງສົມເຫດສົມຜົນວ່າ ເອກະສານລາຍງານການເງິນແມ່ນປາສະຈາກຂໍ້ຜິດພາດອັນໃຫ່ຍ.

ການກວດສອບລວມມີຂັ້ນຕອນການດຳເນີນການກວດສອບ ເພື່ອເກັບກຳຫຼັກຖານຢັ້ງຢືນຄວາມຖືກຕ້ອງຂອງຈຳນວນເງິນ ແລະ ການເປີດເຜີຍຂໍ້ມູນໃນເອກະສານລາຍງານການເງິນ. ຂັ້ນຕອນການຄັດເລືອກແມ່ນຂຶ້ນກັບການພິຈາລະນາຂອງນັກກວດສອບ ເຊິ່ງລວມເຖິງການປະເມີນລະດັບຄວາມສ່ຽງຂອງຂໍ້ຜິດພາດອັນໃຫຍ່ຫຼວງຂອງເອກະສານລາຍງານການເງິນ ບໍ່ວ່າຈະແມ່ນຍ້ອນການສໍ້ໂກງ ຫຼື ຄວາມຜິດພາດຕ່າງໆ. ໃນການປະເມີນຄວາມສ່ຽງດັ່ງກ່າວ ຜູ້ກວດສອບຈະພິຈາລະນາບັນດາການຄວບຄຸມພາຍໃນທີ່ກ່ຽວຂ້ອງກັບການກະກຽມ ແລະ ການນຳສະເໜີເອກະສານລາຍງານການເງິນຂອງທະນາຄານ ເພື່ອອອກແບບແຜນຂັ້ນຕອນໃນການກວດສອບໃຫ້ແທດເໝາະກັບສະພາບການຕ່າງໆ ແຕ່ບໍ່ແມ່ນເພື່ອຈຸດປະສົງໃນການອອກຄຳເຫັນກ່ຽວກັບປະສິດທິພາບໃນການຄວບຄຸມພາຍໃນຂອງທະນາຄານ. ການກວດສອບນີ້ຍັງໄດ້ລວມການປະເມີນຄວາມເໝາະສົມຂອງນະໂຍບາຍການບັນຊີທີ່ນຳໃຊ້ຢູ່, ຄວາມສົມເຫດສົມຜົນຂອງການຄາດຄະເນທາງການບັນຊີທີ່ຄະນະອຳນວຍການວາງອອກ ພ້ອມກັນນັ້ນກໍຍັງປະເມີນພາບລວມຂອງການນຳສະເໜີເອກະສານລາຍງານການເງິນອີກດ້ວຍ.

ພວກຂ້າພະເຈົ້າເຊື່ອວ່າຫຼັກຖານການກວດສອບທີ່ພວກຂ້າພະເຈົ້າຮວບຮວມໄດ້ແມ່ນພຽງພໍ ແລະ ເໝາະສົມເພື່ອເປັນພື້ນຖານໃນການສະແດງຄຳເຫັນແບບມີເງື່ອນໄຂຂອງພວກຂ້າພະເຈົ້າ.

Building a better
working world

*ພື້ນຖານການອອກຄຳເຫັນແບບມີເງື່ອນໄຂ*

1. ພວກຂ້າພະເຈົ້າໃຫ້ເອົາໃຈໃສ່ຕໍ່ບົດອະທິບາຍຊ້ອນທ້າຍເລກທີ 12 ໃນເອກະສານລາຍງານການເງິນ. ປະກອບມີຫຼັກຊັບທີ່ຖືໄວ້ຈົນຄົບກຳນົດ ນະວັນທີ 31 ທັນວາ 2015 ແມ່ນ 30,000 ລ້ານກີບ. ເຊິ່ງແມ່ນພັນທະບັດທີ່ເກີນກຳນົດທີ່ອອກໂດຍ ກະຊວງ ການເງິນ ທີ່ຄົບກຳນົດໃນປີ 2014. ຮອດວັນທີ່ຂອງບົດລາຍງານນີ້, ທະນາຄານຍັງບໍ່ສາມາດຮັບການຢັ້ງຢືນທີ່ເປັນລາຍລັກອັກສອນຈາກ ກະຊວງ ການເງິນ ກ່ຽວກັບການຊຳລະພັນທະບັດເຫຼົ່ານີ້. ເນື່ອງຈາກການບັນທຶກບັນຊີຂອງທະນາຄານ, ພວກຂ້າພະເຈົ້າບໍ່ສາມາດດຳເນີນຂັ້ນຕອນທີ່ຈຳເປັນເພື່ອເກັບກຳຫຼັກຖານການກວດສອບທີ່ຄົບຖ້ວນ ເພື່ອກຳນົດຄວາມເປັນໄປໄດ້ໃນການເກັບກູ້ຄືນ ແລະ ຈຳນວນຂອງເງິນແຮທີ່ກ່ຽວຂ້ອງທີ່ຄວນຫັກໄວ້, ຖ້າກໍລະນີມີການເຊື່ອມຄ່າຂອງພັນທະບັດເຫຼົ່ານີ້.

2. ລວມຢູ່ໃນໜີ້ຕ້ອງສົ່ງດອກເບ້ຍຄ້າງຈ່າຍທີ່ສະແດງໃນໃບສະຫຼຸບຊັບສິນບັດ ນະວັນທີ 31 ທັນວາ 2015 ຈຳນວນ 65,457 ລ້ານກີບ ແມ່ນໜີ້ຕ້ອງສົ່ງດອກເບ້ຍຄ້າງຈ່າຍຂອງເງິນຝາກມີກຳນົດ. ທະນາຄານບໍ່ສາມາດສົມທຽບຍອດຈຳນວນນີ້ກັບບັນຊີຍ່ອຍ/ລາຍການເງິນຝາກ. ເນື່ອງຈາກຄວາມບໍ່ພ້ອມຂອງຂໍ້ມູນ, ພວກຂ້າພະເຈົ້າຈຶ່ງບໍ່ສາມາດທີ່ຈະດຳເນີນຂັ້ນຕອນການກວດສອດທາງເລືອກໄດ້ ເພື່ອຢັ້ງຢືນການມີຢູ່/ການເກີດຂຶ້ນ, ຄວາມສົມບູນ ແລະ ການຕີມູນຄ່າ/ການວັດແທກມູນຄ່າຂອງໜີ້ຕ້ອງສົ່ງດອກເບ້ຍຄ້າງຈ່າຍເຫຼົ່ານັ້ນ ແລະ ລາຍຈ່າຍດອກເບ້ຍທີ່ກ່ຽວຂ້ອງ ແລະ ຜົນກະທົບທີ່ອາດຈະເກີດຂຶ້ນຕໍ່ກັບຖານະທາງການເງິນ ແລະ ຜົນການດຳເນີນງານຂອງທະນາຄານ ນະວັນທີ ແລະ ສຳລັບປີທີ່ສິ້ນສຸດວັນທີ 31 ທັນວາ 2015.

*ຄຳເຫັນແບບມີເງື່ອນໄຂ*

ໃນຄຳເຫັນຂອງພວກຂ້າພະເຈົ້າ, ນອກຈາກຜົນກະທົບຂອງບັນຫາທີ່ລະບຸໄວ້ໃນວັກ "ພື້ນຖານໃນການອອກຄຳເຫັນແບບມີເງື່ອນໄຂ" ຂ້າງເທິງນີ້, ເອກະສານລາຍງານການເງິນສະບັບນີ້ໄດ້ສະແດງຖານະການເງິນອັນຖືກຕ້ອງຂອງທະນາຄານນະວັນທີ 31 ທັນວາ 2015, ລວມທັງຜົນປະກອບການ ແລະ ໃບລາຍງານກະແສເງິນສົດໃນທ້າຍປີ ໂດຍສອດຄ່ອງຕາມກົດໝາຍບັນຊີຂອງ ສປປ ລາວ ແລະ ລະບຽບການທີ່ວາງອອກໂດຍທະນາຄານ ແຫ່ງ ສປປ ລາວ ທີ່ກ່ຽວຂ້ອງກັບການກະກຽມ ແລະ ນຳສະເໜີເອກະສານລາຍງານການເງິນ.

Building a better
working world

***ບັນຫາທີ່ຄວນເໜັ້ນໜັກ***

ໂດຍປາສະຈາກການອອກຄຳເຫັນແບບມີເງື່ອນໄຂ, ພວກຂ້າພະເຈົ້າຂໍສະເໜີບັນຫາທີ່ຄວນເອົາໃຈໃສ່ໃນເອກະສານຊ້ອນທ້າຍ 2.3 ໃນເອກະສານລາຍງານການເງິນກ່ຽວກັບ ຄວາມສືບເນື່ອງໃນການດຳເນີນທຸລະກິດ. ນະວັນທີ 31 ທັນວາ 2015, ທະນາຄານໄດ້ມີການຂາດທຶນສະສົມຢູ່ (109,303) ລ້ານກີບ, ເຊິ່ງໄດ້ສົ່ງຜົນກັບທຶນຂອງຜູ້ຖືຮຸ້ນເຫຼືອພຽງແຕ່ 22,854 ລ້ານກີບ. ສະພາບການດັ່ງກ່າວນີ້ໄດ້ເຮັດໃຫ້ເກີດຂໍ້ສົງໄສກ່ຽວກັບຄວາມອາດສາມາດຂອງທະນາຄານໃນການດຳເນີນທຸລະກິດຢ່າງຕໍ່ເນື່ອງ. ເຖິງຢ່າງໃດກໍຕາມ, ຜູ້ຖືຮຸ້ນຂອງທະນາຄານໄດ້ຢັ້ງຢືນວ່າ ພວກເຂົາເຈົ້າມີຄວາມຕັ້ງໃຈທີ່ຈະໃຫ້ທຸກໆຄວາມຮ່ວມມືທາງການເງິນທີ່ຈຳເປັນ ເພື່ອໃຫ້ແນ່ໃຈວ່າ ທະນາຄານຈະມີແຫລ່ງທຶນພຽງພໍຕໍ່ກັບການຊຳລະໜີ້ສິນເມື່ອຮອດກຳນົດເວລາ ແລະ ສະໜັບສະໜູນທາງການເງິນ ສຳລັບການດຳເນີນງານທຸລະກິດຂອງທະນາຄານໃນປີຕໍ່ໄປ. ຜູ້ຖືຮຸ້ນຂອງທະນາຄານ ໄດ້ຢັ້ງຢືນວ່າ ພວກເຂົາເຈົ້າຈະບໍ່ຮຽກຮ້ອງໃຫ້ຊຳລະຄືນເງິນດັ່ງກ່າວທີ່ໄດ້ສະໜັບສະໜູນທະນາຄານຈົນກ່ວາລູກໜີ້ ແລະ ພາກສ່ວນອື່ນຈະໄດ້ຮັບການຊຳລະສະສາງຢ່າງເຕັມທີ່. ດັ່ງນັ້ນ, ການກະກຽມບົດລາຍງານຖານະການເງິນສະບັບນີ້ ແມ່ນຖືກກະກຽມບົນພື້ນຖານຄວາມສືບເນື່ອງໃນການດຳເນີນທຸລະກິດ.

ດັ່ງທີ່ໄດ້ເປີດເຜີຍໃນບົດອະທິບາຍຊ້ອນທ້າຍເລກທີ 22 ໃນເອກະສານລາຍງານການເງິນ, ທຶນຈົດທະບຽນທີ່ໄດ້ປະກອບຂອງທະນາຄານ ນະວັນທີ 31 ທັນວາ 2015 ແມ່ນ 122,786 ລ້ານກີບ. ເຊິ່ງນີ້ບໍ່ສອດຄ່ອງກັບດຳລັດເລກທີ 141/ນຍ ທີ່ອອກໂດຍນາຍົກລັດຖະມົນຕີ ໃນວັນທີ 24 ກັນຍາ 2009, ລະບຸວ່າ ທະນາຄານທຸລະກິດທັງໝົດໃນ ສປປ ລາວ ແມ່ນຕ້ອງໄດ້ເພີ່ມທຶນຈົດທະບຽນຂອງພວກເຂົາເປັນ 300,000 ລ້ານກີບ ໃນວັນທີ 1 ມັງກອນ 2015

Ernst & Young Lao Ltd

ERNST & YOUNG
LAO CO.,LTD

ນະຄອນຫຼວງວຽງຈັນ, ສປປ ລາວ
6 ພຶດສະພາ 2016

# ທະນາຄານ ພົງສະຫວັນ ຈຳກັດ

ໃບລາຍງານຜົນໄດ້ຮັບ
ປະຈຳປີ ວັນທີ 31 ທັນວາ 2015

*ສະກຸນເງິນ: ລ້ານກີບ*

| *ລຳດັບ* | *ລາຍການ* | *ບົດ ອະທິບາຍ ເລກທີ* | *2015* | *2014* |
|---|---|---|---|---|
| **A.** | **ລາຍຮັບ ແລະ ຄ່າໃຊ້ຈ່າຍຈາກການດຳເນີນງານ** | | | |
| 1. | ລາຍຮັບດອກເບ້ຍ ແລະ ລາຍຮັບທີ່ຄ້າຍຄືດອກເບ້ຍ | 3 | 188,069 | 191,154 |
| 2. | ລາຍຈ່າຍດອກເບ້ຍແລະ ລາຍຈ່າຍທີ່ຄ້າຍຄືດອກເບ້ຍ | 3 | (132,904) | (123,956) |
| **I.** | **ລາຍຮັບສຸດທິຈາກດອກເບ້ຍ ແລະ ຄ້າຍຄືດອກເບ້ຍ** | **3** | **55,165** | **67,198** |
| 3 | ລາຍຮັບຈາກຄ່າທຳນຽມ ແລະ ຄ່າບໍລິການ | 4 | 26,574 | 22,848 |
| 4 | ລາຍຈ່າຍຄ່າທຳນຽມ ແລະ ຄ່າບໍລິການ | 4 | (3,595) | (3,656) |
| **II.** | **ລາຍຮັບສຸດທິຈາກຄ່າທຳນຽມ ແລະ ຄ່າບໍລິການ** | **4** | **22,979** | **19,192** |
| 5 | ກຳໄລຈາກການລົງທຶນຫຼັກຊັບ | | - | 794 |
| 6 | ກຳໄລ/(ຂາດທຶນ) ສຸດທິ ຈາກການຊື້ຂາຍເງິນຕາຕ່າງປະເທດ | 5 | 11,428 | 10,609 |
| **III.** | **ລາຍຮັບສຸດທິຈາກການດຳເນີນງານ** | | **89,572** | **97,793** |
| **B** | **ລາຍຮັບ ແລະ ລາຍຈ່າຍອື່ນໆ** | | | |
| **7** | **ລາຍຮັບຈາກການດຳເນີນງານອື່ນໆ** | **6** | **22,659** | **9,710** |
| **8** | **ລາຍຈ່າຍບໍລິຫານ** | | **(68,904)** | **(71,862)** |
| 8.1 | ເງິນເດືອນ ແລະ ຄ່າໃຊ້ຈ່າຍໃຫ້ພະນັກງານ | 7 | (47,451) | (46,040) |
| 8.2 | ລາຍຈ່າຍບໍລິຫານອື່ນໆ | 8 | (21,453) | (25,822) |
| **9** | **ຄ່າຫຼຸ້ຍຫ້ຽນ ແລະ ຄ່າເສື່ອມ** | **16, 17** | **(14,454)** | **(13,654)** |
| **10** | **ລາຍຈ່າຍຈາກການດຳເນີນງານອື່ນໆ** | **9** | **1,590** | **(13,066)** |
| **11** | **ຄ່າເສື່ອມສະເພາະສຸດທິ (ເກີດຂຶ້ນ)/ເກັບຄືນ ຄ່າເສື່ອມເງິນກູ້ ແລະ ເງິນລ່ວງໜ້າໃຫ້ລູກຄ້າ** | | **(25,065)** | **12,259** |
| 11.1 | ລາຍຈ່າຍຄັງແຮສະເພາະສຳລັບໜີ້ເສຍ | 14.1 | (78,390) | (8,960) |
| 11.2 | ເກັບຄືນຄັງແຮສະເພາະສຳລັບໜີ້ເສຍ | 14.1 | 53,325 | 21,219 |
| **IV.** | **ລວມ(ກຳໄລ)/ຂາດທຶນກ່ອນເສຍອາກອນທັງໝົດ** | | **5,398** | **21,180** |
| **12** | **ອາກອນກຳໄລພາຍໃນປີ** | **21** | **-** | **-** |
| **V.** | **ກຳໄລຫລັງອາກອນ** | | **5,398** | **21,180** |

ກະກຽມໂດຍ: ອະນຸມັດໂດຍ:

ທ່ານ ນາງ ກອງແກ້ວ ຄຳຕັ້ນ
ຫົວໜ້າການເງິນ

ທ່ານ ບຸນຖັນ ວົງສຸລີ
ຜູ້ອຳນວຍການໃຫຍ່

ທະນາຄານ ພົງສະຫວັນ ຈຳກັດ PHONGSAVANH BANK LTD

ນະຄອນຫຼວງວຽງຈັນ, ສປປ ລາວ
6 ພຶດສະພາ 2016

# ທະນາຄານ ພົງສະຫວັນ ຈຳກັດ

ໃບສະຫຼຸບຊັບສິນບັດ
ນະວັນທີ 31 ທັນວາ 2015

*ສະກຸນເງິນ: ລ້ານກີບ*

| *ລະ ຫັດ* | *ລາຍການຊັບສິນ* | *ບົດ ອະທິບາຍ ເລກທີ* | *31 ທັນວາ 2015* | *31 ທັນວາ 2014* |
|---|---|---|---|---|
| **I** | **ເງິນສົດ ແລະ ເງິນຝາກຢູ່ທະນາຄານ ທຫລ** | **10** | **657,893** | **540,535** |
| 1 | ເງິນສົດໃນກຳມື | | 215,719 | 238,059 |
| 2 | ເງິນຝາກກັບ ທຫລ | | 442,174 | 302,476 |
| **II** | **ໜີ້ຕ້ອງຮັບຈາກທະນາຄານ** | **11** | **169,397** | **124,261** |
| 1 | ເງິນຝາກກະແສລາຍວັນ | | 169,397 | 124,261 |
| 2 | ເງິນຝາກມີກຳນົດ | | - | - |
| **III** | **ລົງທຶນໃນຫຼັກຊັບ** | | **40,000** | **65,886** |
| 1 | ຫຼັກຊັບປະເພດມີໄວ້ເພື່ອຂາຍ | 12 | 40,000 | 65,886 |
| **IV** | **ເງິນກູ້ ແລະ ລາຍຈ່າຍລ່ວງໜ້າໃຫ້ລູກຄ້າ(ຫຼັງຫັກຄັງເງິນແຮ)** | **13** | **1,607,819** | **1,468,645** |
| **V** | **ຊັບສິນບັດຄົງທີ່** | | **180,020** | **170,851** |
| 1 | ການກໍ່ສ້າງກຳລັງດຳເນີນ ແລະ ຊັບສິນບັດຄົງທີ່ກຳລັງຊື້ | 15 | 15,601 | 32,079 |
| 2 | ຊັບສິນບັດຄົງທີ່ມີຕົວຕົນ | 16 | 125,341 | 106,505 |
| 3 | ຊັບສິນບັດຄົງທີ່ບໍ່ມີຕົວຕົນ | 17 | 39,078 | 32,267 |
| **VI** | **ຊັບສິນອື່ນໆ** | **18** | **121,300** | **88,570** |
| 1 | ໜີ້ຕ້ອງຮັບຈາກດອກເບ້ຍຄ້າງຮັບ | | 38,298 | 24,719 |
| 2 | ໜີ້ຕ້ອງຮັບຈາກອາກອນທີ່ຈ່າຍເກີນ | | 7,141 | 3,173 |
| 3 | ຊັບສິນອື່ນໆ | | 75,882 | 60,731 |
| 4 | ເງິນແຮຈາກຊັບສິນອື່ນໆ | | (21) | (53) |
| | **ລວມຊັບສິນທັງໝົດ** | | **2,776,429** | **2,458,748** |

# ທະນາຄານ ພົງສະຫວັນ ຈຳກັດ

ໃບສະຫຼຸບຊັບສິນບັດ (ຕໍ່)
ນະວັນທີ 31 ທັນວາ 2015

*ສະກຸນເງິນ: ລ້ານກີບ*

| *ລະ ຫັດ* | *ລາຍການໜີ້ສິນ ແລະ ທຶນ* | *ເອກະ ສານຊ້ອນ ທ້າຍ* | *31 ທັນວາ 2015* | *31 ທັນວາ 2014* |
|---|---|---|---|---|
| **I** | **ໜີ້ຕ້ອງສົ່ງໃຫ້ທະນາຄານອື່ນ** | **19** | **99,233** | **15,557** |
| 1 | ເງິນຝາກກະແສລາຍວັນ | | 96,236 | 831 |
| 2 | ໜີ້ຕ້ອງສົ່ງອື່ນໆໃຫ້ທະນາຄານອື່ນ | | 2,997 | 14,726 |
| **II** | **ໜີ້ຕ້ອງສົ່ງລູກຄ້າ** | **20** | **2,570,669** | **2,347,467** |
| 1 | ເງິນຝາກກະແສລາຍວັນ ແລະ ເງິນຝາກປະຈຳວັນ | | 246,167 | 195,036 |
| 2 | ເງິນຝາກປະຢັດ | | 796,608 | 806,472 |
| 3 | ເງິນຝາກມີກຳນົດ | | 1,527,894 | 1,345,959 |
| **V** | **ໜີ້ສິນອື່ນໆ** | | **83,673** | **74,456** |
| 1 | ໜີ້ຕ້ອງສົ່ງດອກເບ້ຍຄ້າງຈ່າຍ | | 67,195 | 61,974 |
| 2 | ໜີ້ຕ້ອງສົ່ງອາກອນໃຫ້ລັດ | 21 | - | - |
| 3 | ໜີ້ສິນອື່ນໆ | 22 | 16,478 | 12,482 |
| | **ລວມໜີ້ສິນ** | | **2,753,575** | **2,437,480** |
| **VI** | **ທຶນ ແລະ ຄັງແຮ** | | | |
| 1 | ທຶນຈົດທະບຽນ | 23 | 122,786 | 122,786 |
| 2 | ຄັງແຮທົ່ວໄປສຳລັບສູນເສຍເງິນກູ້ລວມ | 14.2 | 9,371 | 13,183 |
| 3 | ຄັງສະສົມຕາມລະບຽບການ | | - | - |
| 4 | ຂາດທຶນສະສົມ | | (109,303) | (114,701) |
| | **ລວມທຶນ** | | **22,854** | **21,268** |
| | **ລວມທຶນ ແລະ ໜີ້ສິນ** | | **2,776,429** | **2,458,748** |

# ທະນາຄານ ພົງສະຫວັນ ຈຳກັດ

ໃບສະຫຼຸບຊັບສິນບັດ (ຕໍ່)
ນະວັນທີ 31 ທັນວາ 2015

*ສະກຸນເງິນ: ລ້ານກີບ*

| | *ລາຍການນອກໃບສະຫຼຸບຊັບສິນບັດ* | *ບົດ ອະທິບາຍ ເລກທີ* | *31 ທັນວາ 2015* | *31 ທັນວາ 2014* |
|---|---|---|---|---|
| **I** | **ຂໍ້ຜູກພັນທາງສັນຍາທີ່ໃຫ້ໄດ້** | | | |
| **A** | **ຂໍ້ຜູກພັນທາງສັນຍາກ່ຽວກັບການເງິນ** | | **4,174** | **4,829** |
| 1 | ຂໍ້ຜູກພັນທາງສັນຍາກ່ຽວກັບການເງິນຕໍ່ທະນາຄານອື່ນ | | 4,174 | 4,829 |
| **B** | **ຂໍ້ຜູກພັນທາງສັນຍາກ່ຽວກັບການຮັບປະກັນ** | | **-** | **-** |
| 1 | ຂໍ້ຜູກພັນທາງສັນຍາກ່ຽວກັບການຮັບປະກັນຕໍ່ລູກຄ້າ | | - | - |
| | **ລວມຍອດຂໍ້ຜູກພັນ** | | **4,174** | **4,829** |
| **II** | **ຫຼັກຊັບຄ້ຳປະກັນ ແລະ ການຈຳນອງ** | | | |
| **A** | **ຫລັກຊັບຄ້ຳປະກັນ ແລະ ຈຳນອງກ່ຽວກັບເງິນກູ້** | | **6,633,115** | **5,921,264** |
| 1 | ຫລັກຊັບຄ້ຳປະກັນ ແລະ ຈຳນອງກ່ຽວກັບເງິນກູ້ໃຫ້ລູກຄ້າ | | 6,633,115 | 5,921,264 |
| | **ຍອດຂອງຫຼັກຊັບຄ້ຳປະກັນ ແລະ ການຈົດຈຳນອງ** | | **6,633,115** | **5,921,264** |

ກະກຽມໂດຍ: | ອະນຸມັດໂດຍ:

ທະນາຄານ ພົງສະຫວັນ ຈຳກັດ PHONGSAVANH BANK LTD

ທ່ານ ນາງ ກອງແກ້ວ ຄຳຕົ້ນ
ຫົວໜ້າການເງິນ

ທ່ານ ບຸນຖົ້ມ ວົງສຸລີ
ຜູ້ອຳນວຍການໃຫຍ່

ນະຄອນຫຼວງວຽງຈັນ, ສປປ ລາວ
6 ພຶດສະພາ 2016

# ທະນາຄານ ພົງສະຫວັນ ຈໍາກັດ

ໃບລາຍງານສ່ວນປ່ຽນແປງທຶນຕົນເອງ
ປະຈໍາປີ ວັນທີ 31 ທັນວາ 2015

| | ທຶນຈົດທະບຽນ<br>ລ້ານກີບ | ຄັງແຮທົ່ວໄປສໍາລັບກິດຈະກໍາສິນເຊື່ອ<br>ລ້ານກີບ | ຂາດທຶນສະສົມ<br>ລ້ານກີບ | ລວມ<br>ລ້ານກີບ |
|---|---|---|---|---|
| **ຍອດເຫລືອ ນະວັນທີ 31 ທັນວາ 2013** | **122,786** | **9,519** | **(128,506)** | **3,799** |
| ເງິນປັນຜົນທີ່ຈ່າຍໃຫ້ຜູ້ຖືຮຸ້ນ | - | - | (5,000) | (5,000) |
| ກໍາໄລສຸດທິພາຍໃນປີ | - | - | 21,180 | 21,180 |
| ລາຍຈ່າຍຄັງເງິນແຮທົ່ວໄປພາຍໃນປີ | - | 10,667 | - | 10,667 |
| ສ່ວນປ່ຽນແປງລາຍຈ່າຍຄັງເງິນແຮທົ່ວໄປພາຍໃນປີ | | (7,024) | | (7,024) |
| ສ່ວນຕ່າງອັດຕາແລກປ່ຽນ | - | 21 | - | 21 |
| ອາກອນກໍາໄລເພີ່ມເຕີມ 2013 | - | - | (2,375) | (2,375) |
| **ຍອດເຫຼືອ ນະວັນທີ31 ທັນວາ 2014** | **122,786** | **13,183** | **(114,701)** | **21,268** |
| ກໍາໄລສຸດທິພາຍໃນປີ | - | - | 5,398 | 5,398 |
| ລາຍຈ່າຍຄັງເງິນແຮທົ່ວໄປພາຍໃນປີ | - | 2,890 | - | 2,890 |
| ສ່ວນປ່ຽນແປງລາຍຈ່າຍຄັງເງິນແຮທົ່ວໄປພາຍໃນປີ | | (6,702) | | (6,702) |
| **ຍອດເຫຼືອ ນະວັນທີ 31 ທັນວາ2015** | **122,786** | **9,371** | **(109,303)** | **22,854** |

ກະກຽມໂດຍ:

ທ່ານ ນາງ ກອງແກ້ວ ຄໍາຕົ້ນ
ຫົວໜ້າການເງິນ
ນະຄອນຫຼວງວຽງຈັນ, ສປປ ລາວ
6 ພຶດສະພາ 2016

ອະນຸມັດໂດຍ

ທະນາຄານ ພົງສະຫວັນ ຈໍາກັດ PHONGSAVANH BANK LTD

ທ່ານ ບຸນຖຸ້ນ ວົງສຸລີ
ຜູ້ອໍານວຍການໃຫຍ່

# ທະນາຄານ ພົງສະຫວັນ ຈຳກັດ

ໃບລາຍງານກະແສເງິນສົດ

ສຳລັບທ້າຍປີ 31 ທັນວາ 2015

| | ບົດອະທິບາຍ ເລກທີ | *2015* *ລ້ານກີບ* | *2014* *ລ້ານກີບ* |
|---|---|---|---|
| **ກຳໄລສຸດທິກ່ອນອາກອນ** | | **5,398** | **21,180** |
| ດັດແກ້ສຳລັບ: | | | |
| ຄ່າຫລຸ້ຍຫ້ຽນ ແລະ ຄ່າເສື່ອມ | 16,17 | 14,454 | 13,654 |
| ຄັງແຮສຳລັບໜີ້ເສຍສຳລັບລູກຄ້າ | 14 | 21,253 | (8,616) |
| ຄັງແຮສຳລັບຊັບສິນອື່ນໆ | | (32) | 53 |
| **ກະແສເງິນສົດຈາກກຳໄລຈາກການດຳເນີນງານກ່ອນການ ປ່ຽນແປງຊັບສິນ ແລະ ໜີ້ສິນໃນການດຳເນີນງານ** | | **41,073** | **26,271** |
| (ເພີ່ມຂຶ້ນ)/ຫຼຸດລົງ ຂອງຊັບສິນໃນການດຳເນີນງານ | | | |
| ຍອດເຫລືອກັບທະນາຄານອື່ນ | | (23,653) | 38,754 |
| ເງິນກູ້ສຳລັບລູກຄ້າ | | (164,239) | (154,521) |
| ຊັບສິນອື່ນໆ | | (28,709) | (15,379) |
| ເພີ່ມຂຶ້ນ/(ຫລຸດລົງ) ໃນໜີ້ສິນຈາກການດຳເນີນງານ | | | |
| ໜີ້ຕ້ອງສົ່ງໃຫ້ທະນາຄານອື່ນ | | 83,676 | 6,059 |
| ເງິນຝາກຂອງລູກຄ້າ ແລະ ໜີ້ຕ້ອງສົ່ງໃຫ້ລູກຄ້າ | | 223,202 | 158,586 |
| ອາກອນກຳໄລທີ່ໄດ້ຈ່າຍພາຍໃນປີ | 21 | (3,968) | (992) |
| ໜີ້ສິນອື່ນໆ | | 9,217 | 18,185 |
| **ກະແສເງິນສົດສຸດທິທີ່ນຳໃຊ້ໃນການດຳເນີນງານ** | | **136,599** | **76,963** |
| ການເຄື່ອນໄຫວດ້ານການລົງທຶນ | | | |
| ການຈັດຊື້ ແລະ ການກໍ່ສ້າງຊັບສິນບັດຄົງທີ່ ແລະ ຊັບສິນໄລຍະຍາວອື່ນໆ | 16,17 | (23,623) | (19,690) |
| ການລົງທຶນໃສ່ຫລັກຊັບ | | (10,000) | (27,143) |
| ຫຼັກຊັບທີ່ຄົບກຳນົດ ແລະ ຖືກຊຳລະຄືນ | | 35,886 | 40,747 |
| **ກະແສເງິນສົດສຸດທິຈາກກິດຈະກຳການລົງທຶນ** | | **2,263** | **(6,086)** |
| **ກິດຈະກຳຂອງກ່ຽວກັບການເງິນ** | | | |
| ເງິນປັນຜົນຕໍ່ຮຸ້ນ | | - | (5,000) |
| **ກະແສເງິນສົດສຸດທິຈາກກິດຈະກຳການດ້ານການເງິນ** | | **-** | **(5,000)** |
| **ການເພີ່ມຂຶ້ນສຸດທິຂອງເງິນສົດ ແລະ ທຽບເທົ່າເງິນສົດ** | | **138,862** | **65,877** |
| **ເງິນສົດ ແລະ ທຽບເທົ່າເງິນສົດໃນຕົ້ນປີ** | | **543,805** | **477,928** |
| ສ່ວນຕ່າງອັດຕາແລກປ່ຽນ | | (21) | - |
| **ເງິນສົດ ແລະ ທຽບເທົ່າເງິນສົດໃນທ້າຍປີ** | **24** | **682,646** | **543,805** |

# ທະນາຄານ ພົງສະຫວັນ ຈຳກັດ

ໃບລາຍງານກະແສເງິນສົດ (ຕໍ່)
ສຳລັບທ້າຍປີ 31 ທັນວາ 2015

| ກະກຽມໂດຍ: | ອະນຸມັດໂດຍ |
| --- | --- |
| ທ່ານ ນາງ ກອງແກ້ວ ຄຳຕື້ນ | ທ່ານ ບຸນຖັນ ວົງສຸລີ |
| ຫົວໜ້າການເງິນ | ຜູ້ອຳນວຍການໃຫຍ່ |

ນະຄອນຫຼວງວຽງຈັນ, ສປປ ລາວ
6 ພຶດສະພາ 2016